**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການເງິນ
ຫ້ອງການ

ເລກທີ 3744 /ຫກ
ນະຄອນຫຼວງວຽງຈັນ, ວັນທີ 18 ພະຈິກ 2025

# ແຈ້ງການ

**ຮຽນ** : - ບັນດາທ່ານ ຫົວໜ້າຫ້ອງການກະຊວງ ທີ່ນັບຖື;
- ບັນດາທ່ານ ຫົວໜ້າຫ້ອງການ ອົງການລັດທຽບເທົ່າກະຊວງ ທີ່ນັບຖື;
- ບັນດາທ່ານ ຫົວໜ້າຫ້ອງວ່າການແຂວງ, ນະຄອນຫຼວງວຽງຈັນ ທີ່ນັບຖື;
- ບັນດາທ່ານ ຫົວໜ້າພະແນກ ແລະ ນະຄອນຫຼວງວຽງຈັນ ທີ່ນັບຖື;
- ບັນດາທ່ານ ຜູ້ອຳນວຍການ ລັດວິສາຫະກິດ ແລະ ວິສາຫະກິດລັດລົງທຶນ ຢູ່ຂັ້ນສູງກາງ ແລະ ຂັ້ນທ້ອງຖິ່ນ ທີ່ນັບຖື;
- ບັນດາທ່ານ ຫົວໜ້າຂະແໜງການ ຈັດຊື້-ຈັດຈ້າງແຂວງ ແລະ ນະຄອນຫຼວງວຽງຈັນ ທີ່ນັບຖື.

**ເລື່ອງ** : ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ແລະ ນຳໃຊ້ເວັບໄຊ ຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ.

- ອີງຕາມ ກົດໝາຍວ່າດ້ວຍຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການ ກະຊວງການເງິນ ສະບັບເລກທີ 2670/ກງ, ລົງວັນທີ 22 ສິງຫາ 2025;
- ອີງຕາມ ໜັງສືສະເໜີ ຂອງກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ ສະບັບເລກທີ 375/ກປຈ, ລົງວັນທີ 14 ຕຸລາ 2025.

ຫ້ອງການ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ໃນໄລຍະຜ່ານມາໄດ້ມີການໂຮມບັນດາກະຊວງ ແລະ ປັບປຸງກົງຈັກການຈັດຕັ້ງຫຼາຍພາກສ່ວນ ເຊິ່ງເຮັດໃຫ້ມີການສັບຊ້ອນພະນັກງານໃນແຕ່ລະກົມກອງຄືນໃໝ່. ໃນນັ້ນໄດ້ຕິດພັນກັບວຽກງານການຄຸ້ມຄອງ ແລະ ນຳໃຊ້ເວບໄຊດ້ວຍທຶນຂອງລັດ http://ppmd.mof.gov.la ຊຶ່ງຜ່ານມາໄດ້ມີການຝຶກອົບຮົມກ່ຽວກັບວຽກງານຄຸ້ມຄອງ ແລະ ນຳໃຊ້ເວັບໄຊ ຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງໃນໄລຍະຜ່ານມາແລ້ວ, ເພື່ອເຮັດໃຫ້ວຽກງານດັ່ງກ່າວ ສາມາດສືບຕໍ່ຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ ແລະ ຕໍ່ເນື່ອງ ພ້ອມທັງໃຫ້ທຸກພາກສ່ວນອື່ນໆທັງໝົດທີ່ນຳໃຊ້ທຶນຂອງລັດ ຢູ່ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ແມ່ນໃຫ້ຈັດຕັ້ງປະຕິບັດ ການຄຸ້ມຄອງ ແລະ ນຳໃຊ້ເວັບໄຊ ຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ຢ່າງເຂັ້ມງວດ ດັ່ງນີ້:

1. ສຳລັບບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ມີການໂຮມກະຊວງເຂົ້າກັນ ແລະ ສັບຊ້ອນການຈັດຕັ້ງພາຍໃນຄືນໃໝ່ນັ້ນ, ແມ່ນໃຫ້ປັບປຸງຂໍ້ຕົກລົງທີ່ອອກກ່ອນໜ້ານີ້ຄືນໃໝ່ ໂດຍແມ່ນຫ້ອງການກະຊວງ ແລະ ຫ້ອງການອົງການລັດທຽບເທົ່າກະຊວງ ເປັນເຈົ້າການໃນການລາຍງານຂັ້ນເທິງເພື່ອໃຫ້ແທດເໝາະ ແລະ ສອດຄ່ອງກັບການຫັນປ່ຽນໃໝ່ໃນໄລຍະປະຈຸບັນ ທີ່ຄຸ້ມຄອງ ແລະ ນຳໃຊ້ເວັບໄຊຕົວຈິງ;
2. ສຳລັບບັນດາກະຊວງ, ອົງການລັດທຽບເທົ່າກະຊວງໃດ ທີ່ຍັງບໍ່ທັນໄດ້ອອກຂໍ້ຕົກລົງແຕ່ງຕັ້ງຄະນະຮັບຜິດຊອບການຄຸ້ມຄອງ ແລະ ນຳໃຊ້ເວັບໄຊ ແມ່ນໃຫ້ຮີບຮ້ອນຄົ້ນຄວ້າອອກຂໍ້ຕົກລົງແຕ່ງຕັ້ງຄະນະຄຸ້ມຄອງ ແລະ ນຳໃຊ້ເວັບໄຊ ເພື່ອຈັດຕັ້ງປະຕິບັດໃນຄວາມຮັບຜິດຊອບຂອງຕົນ;

3. ໃຫ້ບັນດາຫ້ອງການວ່າການແຂວງ ແລະ ນະຄອນຫຼວງວຽງຈັນ, ພະແນກການເງິນແຂວງ ແລະ ນະຄອນຫຼວງວຽງຈັນ, ບັນດາລັດວິສາຫະກິດ ແລະ ວິສາຫະກິດລັດລົງທຶນ ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ, ບັນດາຂະແໜງການຈັດຊື້-ຈັດຈ້າງແຂວງ ແລະ ນະຄອນຫຼວງວຽງຈັນ ທີ່ຍັງບໍ່ທັນຜ່ານການຝຶກອົບຮົມວຽກງານດັ່ງກ່າວ ແມ່ນໃຫ້ຮີບຮ້ອນຄົ້ນຄວ້າ ອອກຂໍ້ຕົກລົງເພື່ອແຕ່ງຕັ້ງຄະນະຮັບຜິດຊອບຄຸ້ມຄອງ ແລະ ນຳໃຊ້ເວັບໄຊການ ຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ເພື່ອໃຫ້ມີການຈັດຕັ້ງປະຕິບັດ ແລະ ເພື່ອສະດວກໃນການຄຸ້ມຄອງ, ຕິດຕາມການນຳໃຊ້ຢູ່ຂັ້ນຂອງຕົນພ້ອມທັງສົ່ງໃຫ້ ກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ ກະຊວງການເງິນ ເພື່ອສັງລວມ, ກວດກາ, ຕິດຕາມ ແລະ ຂຶ້ນແຜນກອງປະຊຸມ ຝຶກອົບຮົມວຽກງານດັ່ງກ່າວ;
4. ພາຍຫຼັງສຳເລັດການອອກຂໍ້ຕົກລົງ ວ່າດ້ວຍແຕ່ງຕັ້ງຄະນະຮັບຜິດຊອບການຄຸ້ມຄອງ ແລະ ນຳໃຊ້ເວັບໄຊແລ້ວແມ່ນໃຫ້ທຸກພາກສ່ວນຈັດຕັ້ງປະຕິບັດເອົາຂໍ້ມູນລົງໃນເວັບໄຊ ຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ເຊັ່ນ: ແຜນການຈັດຊື້-ຈັດຈ້າງ, ແຈ້ງການເຊີນປະມູນ, ການມອບສັນຍາ, ລາຍຊື່ຜູ້ສະໜອງທີ່ໄດ້ຮັບສັນຍາ ແລະ ອື່ນໆ ຕາມທີ່ໄດ້ຮັບອະນຸມັດການເຂົ້າເຖິງການຄຸ້ມຄອງເວັບໄຊໃຫ້ຄົບຖ້ວນ;
5. ໃຫ້ເອົາໃຈໃສ່ຈັດຕັ້ງປະຕິບັດ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ໃຫ້ຖືກຕ້ອງຕາມກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019 ແລະ ບັນດາເອກະສານ ທີ່ກ່ຽວຂ້ອງຢ່າງເຂັ້ມງວດ;
6. ຖ້າຫາກໂຄງການໃດທີ່ມີແຜນງົບປະມານຈັດຊື້-ຈັດຈ້າງຕາມວົງເງິນທີ່ນອນຢູ່ໃນເງື່ອນໄຂການປະມູນແບບເປີດກວ້າງແຕ່ເຈົ້າຂອງໂຄງການບໍ່ເອົາໜັງສືແຈ້ງການເຊີນປະມູນ ລົງໃນເວັບໄຊການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ແມ່ນບໍ່ອະນຸຍາດໃຫ້ ພະນັກງານຂອງກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ ແລະ ຂະແໜງການຈັດຊື້-ຈັດຈ້າງ ຢູ່ຂັ້ນແຂວງ ແລະ ນະຄອນຫຼວງວຽງຈັນ ລົງລາຍເຊັນ ຢັ້ງຢືນໃສ່ບົດບັນທຶກການເປີດປະມູນເດັດຂາດ, ພ້ອມທັງໃຫ້ໂຈະການເປີດຊອງປະມູນ ໂຄງການຈັດຊື້-ຈັດຈ້າງດັ່ງກ່າວ ແບບອັດຕະໂນມັດ (ໂດຍບໍ່ຈຳເປັນລາຍງານ) ແລະ ໃຫ້ຈັດຕັ້ງປະຕິບັດການເອົາໜັງສືແຈ້ງການເຊີນປະມູນເປີດກວ້າງດັ່ງກ່າວລົງຄືນໃໝ່ (ນັບແຕ່ໄລຍະເວລາການປະກາດການປະມູນຄືນໃໝ່) ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ ຕາມທາງຄວນດ້ວຍ.

ຫົວໜ້າຫ້ອງການ

ກະຊວງການເງິນ

ຫ້ອງການ

ສົມຈິດ ຄຳມຸງຄຸນ